

# ແຫລ່ງຊ່ວຍເຫລືອອູ້ມຊູພໍ່ແມ່

ແຫລ່ງຊ່ວຍເຫລືອອູ້ມຊູພໍ່ແມ່ສາມາດເປັນເຄື່ອງມືເພື່ອຈະຊ່ວຍເຫລືອຄອບຄົວໄດ້.ແຫລ່ງຊ່ວຍເຫລືອເຫລົ່ານີ້ສາມາດເປັນຫົນທາງທີ່ດີຫລາຍທີ່ຈະພົບກັບພໍ່ແມ່ຄົນ ອື່ນໆ,ເຮັດໃຫ້ລູກຂອງທ່ານຫລິ້ນນຳເດັກນ້ອຍຄົນອື່ນ,ຮຽນຮູ້ຄວາມຊ່ຽວຊານໃຫມ່, ຫລືຕິດແທດທ່ານນຳຜູ້ໃຫ້ການສຶກສາພໍ່ແມ່ຜູ້ທີ່ສາມາດຊ່ວຍທ່ານແກ້ໄຂອຸບປະສັກຕ່າງໆ.

WithinReach ເປັນອົງການບໍ່ຫວັງຜົນກຳໄລທີ່ຊ່ວຍເຫລືອຄອບຄົວເດີນທາງຜ່ານລະບົບສຸຂະພາບອັນສັບສົນແລະການບໍລິການສັງຄົມ. ທ່ານສາມາດຮຽນຮູ້ເພີ້ມເຕີມກ່ຽວກັບ WithinReach ໄດ້ທີ່ withinreachwa.org.

WASHINGTON WorkFirst

WithinReach™

Washington State Department of Social & Health Services

Transforming lives

DSHS 22-1780 LA (Rev. 10/22) Laotian

# ແຫລ່ງຊ່ວຍເຫລືອການລ້ຽງ ລູກແລະ ການອູ້ມຊູຈາກ WithinReach



ການຊອກຫາຄວາມຊ່ວຍເຫລືອທີ່ຖືກຕ້ອງ ເຫມາະສົມແມ່ນຍາກສຳລັບຄອບຄົວ. **WithinReach** ເຮັດໃຫ້ມັນງ່າຍຂື້ນ.

DSHS WorkFirst

ໃນການປະສານງານຮ່ວມກັນນຳ

WithinReach™

Washington State Department of Social & Health Services

Transforming lives



## WithinReach ແມ່ນໃຜ?

WithinReach ຮັບຮູ້ວ່າທຸກໆຄອບຄົວແມ່ນບໍ່ຄືໃຜ.ພະນັກງານຂອງພວກເຮົາໃຫ້ຊ່ອງວ່າງທີ່ບໍ່ເຂົ້າຂ້າງໃຜແລະລວມນຳເພື່ອຈະເວົ້າເຖິງແຫລ່ງຊ່ວຍເຫລືອເພື່ອຈະອູ້ມຊູຄອບຄົວຂອງທ່ານໃຫ້ໄດ້ດີທີ່ສຸດ.ຄອບຄົວຈະສາມາດເວົ້າລົມສະຖານະການແລະສະພາບຂອງເຂົາເຈົ້າໂດຍບໍ່ມີຂອບເຂດເວລາ.

## WithinReach ເຮັດຫຍັງແດ່?

ພະນັກງານຂອງWithinReach ຈະເຮັດວຽກນຳຄອບຄົວຂອງທ່ານເພື່ອຈະຊອກຫາແຫລ່ງຊ່ວຍເຫລືອການລ້ຽງລູກທີ່ຕອບສະນອງຄວາມຕ້ອງການຂອງທ່ານ. ສະວັດດີການບາງຢ່າງຂອງການເຮັດວຽກນຳ WithinReach:

- ການຕິດຕໍ່ສື່ສານທີ່ສະດວກນຳພະນັກງານ.
- ທ່ານຊີ້ບອກສິ່ງທີ່ສຳຄັນກວ່າຫມູ່ຂອງທ່ານ.
- ພະນັກງານໃຊ້ເວລາເພື່ອຈະເຂົ້າໃຈຄວາມຕ້ອງການສ່ວນບຸກຄົນ.
- ການຊອກຫາແຫລ່ງຊ່ວຍເຫລືອທີ່ຖືກເຮັດອອກມາອີງຕາມສະການທີ່ແລະຄວາມຕ້ອງການດ້ານການຂົນສົ່ງໄປມາ.
- ພະນັກງານມີຄວາມຮັບຮູ້ທຸກຢ່າງກ່ຽວກັບ ເງື່ອນໄຂຮັບເອົາແລະກົດກຳນົດຂອງການຈົດຊື່.
- ການສົ່ງຕໍ່ໄດ້ຖືກອີງໃສ່ຄວາມຕ້ອງການຂອງທ່ານ.
- ບ່ອນເກັບກຳແຫລ່ງຊ່ວຍເຫລືອໄດ້ຖືກດັດແປງໃຫມ່ເປັນປະຈຳ.



## ແຫລ່ງຊ່ວຍເຫລືອແນວໃດແດ່ທີ່ມີໄວ້ໃຫ້?

ແຫລ່ງຊ່ວຍເຫລືອອູ້ມຊູພໍ່ແມ່ແຕກຕ່າງກັນໄປອີງຕາມຄວາມຕ້ອງການຂອງຄອບຄົວຂອງທ່ານ.WithinReach ມີແຫລ່ງຊ່ວຍເຫລືອສຳລັບຄອບຄົວທີ່ຄາດວ່າຈະມີລູກແລະພໍ່ແມ່ຂອງລູກຜູ້ນ້ອຍ. ພະນັກງານຈະເຮັດດີທີ່ສຸດທີ່ເຂົາເຈົ້າເຮັດໄດ້ເພື່ອຈະຊອກຫາແຫລ່ງຊ່ວຍເຫລືອທີ່ຕອບສະນອງສິ່ງ ສຳຄັນກວ່າຫມູ່ຂອງທ່ານ. ແຫລ່ງຊ່ວຍເຫລືອທີ່ມີໄວ້ໃຫ້ສາມາດແຕກຕ່າງກັນໄປອີງຕາມສະພາບການບ່ອນຢູ່ອາສັຍຂອງທ່ານ,ຊັບໂຄດແລະອາຍຸຂອງລູກຂອງທ່ານ.

| ***ຕົວຢ່າງຂອງແຫລ່ງຊ່ວຍເຫລືອອູ້ມຊູພໍ່ແມ່:*** |
|---|
| ຫ້ອງຮຽນເຣື່ອງການຄອດລູກ |
| ຫ້ອງຮຽນເຣື່ອງການສຶກສາສຳລັບພໍ່ແມ່ |
| ກຸ່ມຫລິ້ນແລະຮຽນຮູ້ |
| ການຖືພາແລະອຸບປະກອນສຳລັບເດັກນ້ອຍ |
| ການບໍຣິການ Doula |
| ໂຄງການອູ້ມຊູພໍ່ແມ່ຢູ່ໃນເຮືອນ: ໂຄງການ Early Head Start, Parents as Teachers, Nurse Family Partnership, Open Arms Outreach Doula Program,ອື່ນໆ |
| ກຸ່ມອູ້ມຊູພໍ່ແມ່ກຸ່ມໃຫມ່ |
| ໂຄງການ Head Start/ECEAP |



## ທ່ານສາມາດຄາດຫມາຍແນວໃດແດ່?

1. ພະນັກງານຂອງ WorkFirst ຈະສົ່ງໃບສົ່ງຕໍ່ໄປຫາ WithinReach ໃຫ້ທ່ານ.
2. WithinReach ຈະຄົ້ນຄົ້ວຫາໂຄງການຢູ່ໃນເຂດຂອງທ່ານ.
3. WithinReach ຈະໂທຫາ, ເທັກສ໌ຫາຫລືສົ່ງອີແມລ໌ຫາທ່ານ.
   - ພະນັກງານຈະທຳຄວາມພະຍາຍາມສອງສາມເທື່ອເພື່ອຈະຕິດຕໍ່ຫາຄອບຄົວຂອງທ່ານ.
   - ເຂົາເຈົ້າຈະສົ່ງຄວາມໄວ້ຖ້າຫາກວ່າເຂົາເຈົ້າບໍ່ສາມາດຕິດຕໍ່ຫາທ່ານໄດ້.
4. WithinReach ຈະຟັງຄວາມຂ້ອງໃຈແລະສິ່ງທີ່ສຳຄັນກວ່າຫມູ່ຂອງທ່ານ.
5. WithinReach ຈະສົມທຽບທ່ານໃສ່ແຫລ່ງຊ່ວຍເຫລືອທີ່ເຫມາະສົມກັບຄວາມຕ້ອງການຂອງທ່ານທີ່ດີທີ່ສຸດ.
6. WithinReach ຈະເອົາໃຫ້ທ່ານລາຍຊື່ຂອງແຫລ່ງຊ່ວຍເຫລືອທີ່ໄດ້ເວົ້າລົມກັນ.
7. WithinReach ຈະທຳການຕິດແທດນຳແຫລ່ງຊ່ວຍເຫລືອ/ ໂຄງການຂອງຊຸມນຸມຊົນເມື່ອເວລາສາມາດເຮັດໄດ້.

withinreachwa.org